

# ເອກະລັກຂອງຊົນເຜົ່າ

# ສາມຕາວ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe’de’ration suisse
Confederazione Svizzera
Confederaziun svizra

**Swiss Agency for Development and Cooperation SDC**

# ຄຳເຫັນ
# ຂອງຫົວໜ້າກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: "ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ". ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມປຶ້ມກ່ຽວກັບຊົນເຜົ່າ ສາມຕ່າວ ຄືນໃໝ່ໂດຍແຍກຈາກປຶ້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າສາມຕ່າວ ໃນ ສປປ ລາວ. ປຶ້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ສາມຕ່າວ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ ແລະ ບາງຮີດ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ສາມຕ່າວ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕື່ມກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ
ສູນກາງແນວລາວສ້າງຊາດ
ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ....................2015

**ສູນກາງແນວລາວສ້າງຊາດ**
**ຫົວໜ້າກົມຊົນເຜົ່າ**

# ແຜນທີ່ການແຈກຢາຍພົນລະເມືອງ

ປັດຈຸບັນພວກເຂົາເຈົ້າຕັ້ງພູມລຳເນົາ ແລະ ຖິ່ນຖານບ້ານຊ່ອງຢູ່ ແຂວງຫຼວງນ້ຳທາ ແລະ ແຂວງ ບໍ່ແກ້ວ. ມີປະຊາກອນທັງໝົດ 3.533 ຄົນ, ຍິງ 1.772 ຄົນ, ເທົ່າກັບ 0,1 % ຂອງພົນລະເມືອງທົ່ວປະເທດ.




- ຊົນເຜົ່າ ສາມຕ່າວ ທີ່ແຈກຢາຍຢູ່ແຕ່ລະບ່ອນ
  - ແຂວງ ຫຼວງນ້ຳທາ: ເມືອງ ວຽງພູຄາ, ເມືອງ ນາແລ, ເມືອງ ນ້ຳທາ, ເມືອງ ລອງ
  - ແຂວງ ບໍ່ແກ້ວ: ເມືອງ ຫ້ວຍຊາຍ.

# ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ປະຫວັດຄວາມເປັນ, ຕົ້ນກຳເນີດມາຈາກດິນດອນຕອນໃຕ້ຂອງປະເທດ ຈີນ ເຂດ ສິບສອງພັນນາ ແລະ ເຂດ ຊຽງຮຸ່ງ, ນຳພາໂດຍເຈົ້າຫຼວງ ອົງແສງຄຳ ຕໍ່ມາມີພະຍາວົງ ແລະ ເຈົ້າແສງ ເປັນຜູ່ສືບ ທອດ, ສາເຫດຂອງການເຄື່ອນຍ້າຍເນື່ອງຈາກການປະລາໄຊເສິກສິບສອງພັນນາຈຶ່ງໄດ້ຍົກຍ້າຍບ້ານເມືອງມາຢູ່ເມືອງສາມພູປາງຊາຍແດນຂອງປະເທດ ມຽນມາ ຈາກນັ້ນ, ເຂົາເຈົ້າເຄື່ອນຍ້າຍເຂົ້າມາຕັ້ງພູມລຳເນົາຢູ່ປະເທດລາວໄລຍະດຽວກັນກັບຊົນເຜົ່າ ກຶມມຸ, ບິດ ແລະ ລະເມດ.

ຊົນເຜົ່ານີ້ເອີ້ນຕົນເອງວ່າ: “ສາມຕ່າວ” ຊົນເຜົ່າອື່ນເອີ້ນ, ຊື່ທີ່ເຂົາເຈົ້າມັກ ແລະ ຊື່ທີ່ນຳໃຊ້ທາງລັດຖະການໃນປັດຈຸບັນ ກໍແມ່ນຊົນເຜົ່າ “ສາມຕ່າວ”. ຄວາມໝາຍຂອງຊື່ເອີ້ນຊົນເຜົ່າ ນີ້ຕາມປຶ້ມປະຫວັດສາດແຂວງ ຜົ້ງສາລີ ໄດ້ໃຫ້ຮູ້ວ່າ: “ສາມຕ່າວ” ແມ່ນຊື່ສາມກົກ (ສາມເຈົ້າ) ຂອງສາມອານາຈັກນ້ອຍ ໃນສະໄໝສີ່ແສນ ອານມ້າ (ສະໄໝສັກດິນາພະມ້າ ເຂົ້າມາຮຸກຮານປະເທດລາວ)

ສາມຕ່າວ ຍັງມີປະຫວັດເລົ່າສືບຕໍ່ກັນມາ: ແຕ່ກ່ອນເປັນເຜົ່າດຽວກັບຊົນເຜົ່າ ກຶມມຸ, ມີເຂດໜຶ່ງຂອງຊົນເຜົ່າ ກຶມມຸ ທີ່ມີຄວາມຈະເລີນກວ່າ, ມີໂຕອັກສອນຂອງຕົນ. ພວກເຈົ້າກົກ, ເຈົ້າເຫຼົ່າໄດ້ເອົາໂຕອັກສອນຂອງເຜົ່າຕົນໄປຂາຍໃຫ້ເຜົ່າອື່ນ. ຕາມຫຼັງມາ, ກໍເກີດມີການຜິດຖຽງທະເລາະວິວາດກັບເຜົ່າດັ່ງກ່າວ, ຈຳເປັນໄດ້ກັບມາຢູ່ກັບຊົນເຜົ່າຕົນ, ແຕ່ປະຊາຊົນບໍ່ຮັບເອົາເຂົາເຈົ້າອີກ, ຈຶ່ງໜີໄປຢູ່ຕ່າງຫາກ, ປະພາສາ, ປະຣິດຄອງຂອງຊົນເຜົ່າຕົນ, ລອກແບບເອົາຂອງຊົນເຜົ່າອື່ນເຊັ່ນ: ຈາກຖືຜີ ມາຖື ພາມ, ຈາກສາສະໜາພາມ ມາຖື ສາສະໜາພຸດ. ຊົນເຜົ່າ ສາມຕ່າວ ປະກອບມີໜຶ່ງແຊງຄື: “ດອຍ”

# ອາຊີບຂອງຊົນເຜົ່າ ສາມຕ່າວ

ການດຳເນີນທາງດ້ານເສດຖະກິດ, ຊົນເຜົ່າ ສາມຕ່າວ ສ່ວນ ຫຼາຍ ປະກອບຊີບທາງດ້ານກະສິກຳຄື: ການເຮັດໄຮ່, ເຮັດນາປູກເຂົ້າ ໝຽວ. ນອກຈາກນີ້ພວກເຂົາເຈົ້າຍັງປູກພືດຜັກຕ່າງໆ ເພື່ອຮັບໃຊ້ຊີວິດປະຈຳວັນຂອງຄອບຄົວ. ຜູ່ຊາຍມີມູນເຊື້ອໃນວິຊາຫັດຖະກຳຈັກສານ, ຕີເຫຼັກເພື່ອເຮັດເຄື່ອງໃຊ້ໃນຄອບຄົວ, ເຄື່ອງມືການຜະລິດ ແລະ ແມ່ຍິງມີມູນເຊື້ອໃນການຕ່ຳຫູກທໍ່ໄໝເພື່ອເຮັດເຄື່ອງນຸ່ງຫົ່ມ. ສັດທີ່ເຂົາເຈົ້າມັກລ້ຽງໄດ້ແກ່ ຄວາຍ, ໝູ ແລະ ສັດປີກ.

# ທີ່ຕັ້ງບ້ານ ແລະ ເຮືອນ

ຊົນເຜົ່າ ສາມຕ່າວ ມີຄວາມນິຍົມຢູ່ເຮືອນຮ້ານ, ການອອກແບບໃນການປຸກ ສ້າງເຮືອນຈະມີຊານ, ມີເຊຍ, ເຮັດເປັນຫ້ອງ ແລະ ຂັ້ນໄດແມ່ນລູກຄີກຄື: 3, 5, 7, 9 ຂັ້ນ ແລະ ການຈັດຫ້ອງຢູ່ໃນເຮືອນແມ່ນຄ້າຍຄືກັນກັບຂອງຊົນເຜົ່າ ລື້. ສ່ວນວັດສະດຸໃນການກໍ່ສ້າງແມ່ນຂຶ້ນກັບສະພາບຄວາມເປັນຈິງ ແລະ ຖານະຄອບຄົວໃນແຕ່ລະສະໄໝ. ຮີດຄອງປະເພນີກ່ຽວກັບຂໍ້ຫ້າມ ແລະ ການຄະລຳຢູ່ໃນເຮືອນແມ່ນບໍ່ໃຫ້ຄົນນອກລ່ວງເຂົ້າຫ້ອງນອນ.



ພາບໂດຍ: ກົມຊົນເຜົ່າ





ພາບໂດຍ: ກິມຊິນເຜົ່າ

# ເຄື່ອງນຸ່ງຫົ່ມ

ການນຸ່ງຖືຂອງຊົນເຜົ່າ ສາມຕ່າວ ສຳລັບແມ່ຍິງແມ່ນ ນຸ່ງເສື້ອປ້າຍ ແລະ ມີລວດລາຍຢູ່ບ່ອນປາຍ ແລະ ຕີນເສື້ອ, ແຂນເສື້ອມີແຄບລາຍ, ສິ້ນ ເປັນລາຍດອກຫຼາຍສີປົນກັນ ແລະ ກໍມີຜ້າຄຽນຫົວເປັນສີຟ້າ. ສຳລັບ ຜູ່ຊາຍແມ່ນນຸ່ງເສື້ອຄໍເຊີດມີລວດລາຍຢູ່ຄໍ ແລະ ປາກຖົງ, ໂສ້ງ ສີດຳຂາຍາວ.



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກິມຊິນເຜົ່າ

# ອາຫານ ແລະ ເຄື່ອງດື່ມ

ຊົນເຜົ່າ ສາມຕ່າວ ມີຄວາມນິຍົມກິນເຂົ້າໜຽວ, ມັກກິນອາຫານປະເພດລາບ ດິບ, ປີ້ງ, ຈີ່, ເອາະທີ່ມີລົດຊາດເຜັດ ແລະ ເຄັມ, ມັກດື່ມເຫຼົ້າ, ດື່ມນ້ຳດິບ, ສູບຢາ ແລະ ຄ້ຽວໝາກ.





ພາບໂດຍ: ກົມຊົນເຜົ່າ

# ຄວາມເຊື່ອຖື

ຍ້ອນມີການດຳລົງຊີວິດຢູ່ສະຫຼັບສັບຫວ່າງກັບຊົນເຜົ່າອື່ນໆ ເຮັດໃຫ້ເຂົາເຈົ້າເຊື່ອຖືສາສະໜາພຸດ, ພາມ ແລະ ຜີ ທັງແມ່ນວັດທະນະທຳມີລັກສະນະປະສົມປະສານກັບຊົນເຜົ່າອື່ນໆ ທີ່ຢູ່ໃກ້ຄຽງເຊັ່ນ: ຢູ່ບ້ານຂອງເຂົາເຈົ້າຈະມີວັດວາອາຮາມ ແລະ ມີພະສົງສຳມະເນນ. ຄຽງຄູ່ກັນນີ້, ຍັງມີຄວາມເຊື່ອຖືທາງໄສຍະສາດ, ເລື່ອງຜີເຊັ່ນ: ຜີພໍ່, ຜີແມ່, ຜີເຮືອນ, ຜີບ້ານ, ຜີເມືອງ, ຜີແມ່ນ້ຳລຳເຊ, ຜີປ່າ ແລະ ຄວາມເຊື່ອເລື່ອງຈິດວິນຍານອື່ນໆ.

ໃນປີໜຶ່ງໆ ພວກເຂົາເຈົ້າມີການມ່ວນຊື່ນດ້ວຍການເຮັດບຸນຕາມແຕ່ລະເດືອນເຊັ່ນ: ບຸນສູ່ຂັວນເຂົ້າ, ບຸນເຂົ້າຈີ່, ບຸນພະເຫວດ, ບຸນປີໃໝ່, ບຸນເຂົ້າພັນສາ, ບຸນເຂົ້າປະດັບດິນ, ບຸນເຂົ້າສະຫຼາກ ແລະ ບຸນອອກພັນສາ (ການອອກຄອງຂອງພະສົງສຳມະເນນ) ຕາມຮອບວຽນຂອງປະຕິທິນລາວໃນແຕ່ລະເດືອນ.



ພາບໂດຍ: ກົມຊົນເຜົ່າ

# ສິລະປະວັນນະຄະດີພື້ນເມືອງ

ສຳລັບສິລະປະວັນນະຄະດີຂອງຊົນເຜົ່ານີ້ແມ່ນປະກອບມີກອນ ຂັບ, ການລຳ, ເພັງຮ້ອງ, ທຳນອງເສບ, ມີຄຳກອນ, ຄຳຜະຫຍາ, ສຸພາສິດ, ນິທານ, ພື້ນສືບ ທີ່ສ່ອງແສງເຖິງສັງຄົມຂອງແຕ່ລະຍຸກສະໄໝ ແລະ ເຄື່ອງດົນຕີເຊັ່ນ: ກອງ, ປີ່, ຊໍ່, ຄ້ອງ, ຄຸຍ ແລະ ອື່ນໆ.



ພາບໂດຍ: ກົມຊົນເຜົ່າ

# ພາສາປາກເວົ້າ

ຊົນເຜົ່າ ສາມຕ່າວ ບໍ່ມີຕົວໜັງສືຂຽນ, ແຕ່ກໍມີພາສາປາກເວົ້າເປັນອັນສະເພາະຂອງຊົນເຜົ່າຕົນ. ຈັດເຂົ້າໃນໝວດພາສາ ມອນ-ຂະແມ. ຄຽງຄູ່ກັນນີ້ຊົນເຜົ່າ ສາມຕ່າວ ຍັງສາມາດປາກເວົ້າພາສາຂອງຊົນເຜົ່າ ລາວລື້, ຍວນ, ບິດ ແລະ ກຶມມຸ ໄດ້ດີ.

*ຄັດຈາກປຶ້ມບັນດາຊົນເຜົ່າໃນ ສປປ ລາວ*

# ການສົມທຽບ
# ພາສາ ລາວ ກັບ ພາສາ ສາມຕ່າວ

| ລຳດັບ | ພາສາ ລາວ | ພາສາ ສາມຕ່າວ |
|---|---|---|
| 01 | ສະບາຍດີ | ໂງດຍອງ |
| 02 | ໂຊກດີ | ຍອງປີສີມ |
| 03 | ຂອບໃຈ | ລິຍ່ອງ |
| 04 | ຂໍໂທດ | ຂໍໂທດ |
| 05 | ເຈົ້າຊື່ຫຍັງ? | ມີຈີ່ຊື່ເມີະ? |
| 06 | ເຮັດຫຍັງຢູ່? | ຈິຊິເມີະໂງດ? |
| 07 | ກິນເຂົ້າແລ້ວບໍ? | ຫາຍຊອບກ່ອຍ? |
| 08 | ລາກ່ອນ | ເອາະຊິອິເຕິ |
| 09 | ພົບກັນໃໝ່ | ກ່ອຍມາໃໝ່ |

*ຂໍ້ມູນໂດຍ: ແນວລາວສ້າງຊາດ ແຂວງ ຫຼວງນ້ຳທາ*